ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 1659/ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 23.9.2019

ກະຊວງອຸດສາຫະກຳ ແລະ ການຄ້າ
ເລກທີ 2036
ວັນທີ 24/9/19

ກະຊວງອຸດສາຫະກຳ ແລະ ການຄ້າ
ເລກທີ 3048
ວັນທີ 16.9.19

# ແຈ້ງການ

ຮຽນ: - ທ່ານ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ທີ່ນັບຖື.
- ທ່ານ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ.

ເລື່ອງ: ທິດຊີ້ນຳກ່ຽວກັບການຄວັດຕາປະທັບ ຂອງກະຊວງປ້ອງກັນຄວາມສະຫງົບ.

- ອີງຕາມໜັງສືສະເໜີ ສະບັບເລກທີ 1427/ປກສ, ລົງວັນທີ 24 ກໍລະກົດ 2019 ຂອງກະຊວງປ້ອງກັນຄວາມສະຫງົບ.
- ອີງຕາມການຕົກລົງ ແລະ ຊີ້ນຳຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 16-17 ກັນຍາ 2019.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕົກລົງ ແລະ ຊີ້ນຳຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ມາຍັງທ່ານ ຊາບດັ່ງນີ້:

1. ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການສະບັບໃໝ່ ປ່ຽນແທນແຈ້ງການ ສະບັບເລກທີ 1412/ຫອຄ.ກທຄວ, ລົງວັນທີ 12 ກໍລະກົດ 2019 ເພື່ອແຈ້ງໃຫ້ຜູ້ລົງທຶນ (ພາຍໃນ ແລະ ຕ່າງປະເທດ) ທີ່ຂຶ້ນທະບຽນສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ຊາບວ່າ ຜູ້ລົງທຶນທີ່ຂຶ້ນທະບຽນ ສາມາດສະເໜີຂໍຄວັດຕາປະທັບ ຕາມມາດຕາ 21 ຂອງກົດໝາຍວ່າດ້ວຍ ວິສາຫະກິດ (ສະບັບປັບປຸງ) ປີ 2013 ເພື່ອນຳໃຊ້ເຂົ້າໃນການດຳເນີນທຸລະກິດ ແລະ ປ້ອງກັນການປອມແປງ.

2. ໃຫ້ກະຊວງປ້ອງກັນຄວາມສະຫງົບ ປະຕິບັດການຄວັດກາປະທັບ ໃຫ້ສຳເລັດຊ້າສຸດບໍ່ເກີນ 5 ວັນລັດຖະການ ຕາມກົດໝາຍວ່າດ້ວຍ ວິສາຫະກິດ ກຳນົດ ໂດຍໃຫ້ປັບປຸງເງື່ອນໄຂດ້ານເອກະສານໃນການຂໍຄວັດຕາປະທັບໃຫ້ງ່າຍດາຍກວ່າເກົ່າ, ດີແທ້ເມື່ອຜູ້ລົງທຶນ ມີທະບຽນວິສາຫະກິດ ຈາກຂະແໜງອຸດສາຫະກຳ ແລະ ການຄ້າ ແລ້ວ ກໍຄວນຄວັດກາປະທັບໃຫ້ເລີຍ (ບໍ່ຄວນກວດເງື່ອນໄຂອື່ນອີກ) ເພື່ອເປັນການອຳນວຍຄວາມສະດວກໃນການດຳເນີນທຸລະກິດ ແລະ ການລົງທຶນ ຢູ່ ສປປ ລາວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການ ສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເພັດ ພົມພິພັກ

ບ່ອນນຳສົ່ງ:

| | |
|---|---|
| 1. ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| 2. ຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. ກະຊວງແຜນການ ແລະ ການລົງທຶນ | 01 ສະບັບ |
| 4. ຄະນະ ຫສນຍ | 06 ສະບັບ |
| 5. ກົມກວດກາ, ຫສນຍ | 01 ສະບັບ |
| 6. ສຳນັກ | 01 ສະບັບ |